www.xtrapapers.com



Diploma Programme
Programme du diplôme
Programa del Diploma

# Lao A: literature – Standard level – Paper 1
# Lao A : littérature – Niveau moyen – Épreuve 1
# Laosiano A: literatura – Nivel medio – Prueba 1

Friday 8 May 2015 (afternoon)
Vendredi 8 mai 2015 (après-midi)
Viernes 8 de mayo de 2015 (tarde)

1 hour 30 minutes / 1 heure 30 minutes / 1 hora 30 minutos

---

## Instructions to candidates

- Do not open this examination paper until instructed to do so.
- Write a guided literary analysis on one passage only. In your answer you must address both of the guiding questions provided.
- The maximum mark for this examination paper is **[20 marks]**.

## Instructions destinées aux candidats

- N’ouvrez pas cette épreuve avant d’y être autorisé(e).
- Rédigez une analyse littéraire dirigée d’un seul des passages. Les deux questions d’orientation fournies doivent être traitées dans votre réponse.
- Le nombre maximum de points pour cette épreuve d’examen est de **[20 points]**.

## Instrucciones para los alumnos

- No abra esta prueba hasta que se lo autoricen.
- Escriba un análisis literario guiado sobre un solo pasaje. Debe abordar las dos preguntas de orientación en su respuesta.
- La puntuación máxima para esta prueba de examen es **[20 puntos]**.

2215 – 0583



© International Baccalaureate Organization 2015

International Baccalaureate
Baccalauréat International
Bachillerato Internacional

www.xtrapapers.com



ໃຫ້ເຈົ້າວິຈານໃນແງ່ວັນນະຄະດີ**ໜຶ່ງເລື່ອງ**ທີ່ເຈົ້າເລືອກຈາກສອງເລື່ອງຕໍ່ໄປນີ້
ໃນຄໍາຕອບເຈົ້າຕ້ອງເວົ້າເຖິງຄໍາຖາມ**ທັງສອງ**ທີ່ຂຽນໄວ້ຫລັງເລື່ອງ

**1.**

ດໍາແມ່ນທໍາມະຊາດສ້າງ ແສນສິ່ງເສີມປະສົມ
ດໍາມີຄ່າຄຸນນິຍົມ ດັ່ງແດງຂາວຟ້າ
ດໍາບໍ່ຕ່າງສະກູລາແຫລ້ ສີຕັບໝູ - ມອນມຸ່ຍ
ດໍາ ບໍ່ໃສ່ຈູມປາກຈຸ້ຍ ວ່າມັນມື້ອມືດມົນ ສັບນາ

ບາດວ່າ ເກສາເກົ້າ ເນົາແນບໃນຫົວ ຕົນນັ້ນ
ເມື່ອມັນ ຂົວນົວຂາວ ຫາອກແຊມຊົງເຖົ້າ
ຊໍ້າເຫລົ່າ ເຮຣິນຮ້ອນ ໃດຜົມໂດຍດ່ວນ
ຊວນຊີ້ສີ ຊ່ວຍຍ້ອມ ໃຫ້ຜົມປີ້ ປອດດໍາ ນັ້ນນາ

ເຂົ້າຈີ່ດໍາ ຈໍາໝັ້ນ ບໍາລຸງດີມີຄ່າ
ບໍ່ຫາເປີກໍໄດ້ ບໍາລຸງໄສ້ເຊີດພຸງ ແທ້ແຫລ້ວ

ຝຸງເຮົາ ຊີມແຊບຊ້ອຍ ແສນອະຫລ່ອຍ ຫອມຫວນ
ບໍ່ມີ ອວນອົງໃດ ວ່າດໍາດູຮ້າຍ
ກິນຫລາຍໆລືມຈ້ອຍ ສີຂາວກ້ອນເຂົ້າຈີ່
ດໍາຄືລິ ໂນ່ມໜ້ຳ ບໍ່ມີມື້ອໝິ່ນໝອງ ນັ້ນແຫລ້ວ

ມີນິທານກ່າວເວົ້າ ເລື່ອງທ້າວກໍ່າກາດໍາ
ຫັນກັບກາຍເປັນຄົນ ຄ່າສູງພາຍຊ້ອຍ
ເຜັດພອຍສີຄໍາເຂັ້ມ ມະຫານິນນາມຄ່ອງ
ເປັນສິ່ງ ສວນສຸບຄ້ອງ ສະເໜຕູ້ມຕື່ມງາມ ແທ້ໃດ
ຄືນງາມ ບໍ່ໃສ່ຈອນຈາກຟ້າ ເມືອງມິ່ງນະຄອນຂາວ ທີ່ຜຸ້ນ
ດໍ່າໝິ່ນ ຜິວແພວພາວ ເພື່ອນກາເຜນົມຮ້ອນ
ແສນສະອອນອົງເອ້ ໃຜເດ່ຊີໄດ້ແຕ່ງ
ຜິວດໍາແພງຄ່າລ້ານ ຊີນໍາຕີ້ແຕ່ງເອົາ ອີ່ຫລີແຫລ້ວ

ກະວີນເນ *ສີດໍາໃນຄໍາກະວີ* ປີພິມ (2003)

(ກ) ຜູ້ຂຽນໃຊ້ວັນນະສິນກະວີແນວໃດແດ່

(ຂ) ຜູ້ຂຽນໃຊ້ວິທີໃດແດ່ເພື່ອໃຫ້ຜູ້ອ່ານເຊື່ອຄວາມຄິດຂອງເພິ່ນ

www.xtrapapers.com



**2.**

ມີເລື່ອງເລົ່າໄວ້ວ່າ ກ່ອນຄົນເຮົາຈະນັບຖືສິ່ງສັກສິດຄັ້ງທຳອິດເຊັ່ນຜີພະພູມເຈົ້າປ່າ ເຈົ້າພູແລະອື່ນໆນັ້ນກໍມີການເລີ່ມຕົ້ນດ່ັງຕໍ່ໄປນີ້: ແຕ່ກ່ອນໆ ມີທາງເສັ້ນໜຶ່ງ ຢູ່ເຄິ່ງເສັ້ນທາງທີ່ຍາວຢຽດນັ້ນມີກົກໄມ້ໃຫຍ່ກົກໜຶ່ງ ພໍດີເຄິ່ງພຸ້ນເຄິ່ງພີ້ ບໍ່ອ້ອມ ໄປທາງໃດ ກົກໄມ້ນັ້ນມີຮົ່ມກວ້າງໃຫຍ່ອາກາດໂປ່ງເຢັນສະບາຍ ທັງສະອາດດີ ຄົນທີ່ທຽວທາງ ໄປມາຄ້າຂາຍ ກໍມາພັກຜ່ອນກິນເຂົ້າເຊົາແຮງຢູ່ຮົ່ມໄມ້ນັ້ນເລື້ອຍໆ ບໍ່ໄດ້ຂາດ ແຕ່ຢູ່ແຄມທາງຢູ່ໃກ້ໆກັບກົກໄມ້ນັ້ນ ມີຈູມປວກໜຶ່ງ ມື້ໜຶ່ງມີຄົນສາມຄົນ ເດີນທາງມາ ພໍມາຮອດກົກໄມ້ໃຫຍ່ນັ້ນ ກໍແມ່ນເຄິ່ງທາງພ້ອມກັບຕາເວັນທ່ຽງພໍດີ ກໍເລີຍພາກັນພັກຜ່ອນໃນຮົ່ມໄມ້ໃຫຍ່ນັ້ນຊົ່ວຄາວ ແລ້ວກໍພາກັນຈັດແຈງປູຜ້າ ປູແຜປູຟືດໄມ້ໄຂຫໍ່ເຂົ້າຫໍ່ປາເພື່ອຈະພາກັນກິນເຂົ້າ ແຕ່ເວລາຊິພວມກິນເຂົ້າ ເລີຍແນມເຫັນຂີ້ໝາ ຢູ່ແຄມດິນຈູມປວກນັ້ນພວກເພິ່ນຄຶດຂີ້ດຽດຈຶ່ງໃຫ້ຜູ້ໜຶ່ງຫັກ ຟືດໄມ້ໄປປົກໄວ້ແລ້ວຈຶ່ງພາກັນກິນເຂົ້າຕໍ່ໄປ ກິນເຂົ້າແລ້ວພັກຜ່ອນຊົ່ວຄາວ ກໍພາກັນເດີນທາງຕໍ່ ມື້ອື່ນມື້ໃໝ່ມີຜູ້ໃໝ່ເດີນທາງມາອີກກໍພາກັນພັກຜ່ອນກິນເຂົ້າ ເຊົາແຮງເຊັ່ນກັນ ເວລາພັກຜ່ອນຊົ່ວຄາວແແລ້ວກໍພາກັນເດີນທາງຕໍ່ອີກ ແຕ່ເວລາຈະອອກເດີນທາງ ນັ້ນເລີຍເຫັນຟືດໄມ້ທີ່ປົກຂີ້ໝາກໍນຶກວ່າໝູ່ບູຊາ ຄິດວ່າຄົງມີສິ່ງສັກສິດອັນໃດອັນໜຶ່ງ ຈຶ່ງບູຊາ ກໍເລີຍຫັກຟືດໄມ້ໄປບູຊານຳ ພ້ອມທັງເວົ້າວ່າ: ສາທູເດີ ເຈົ້າຈອມປວດເອີຍ! ຂໍໃຫ້ຜູ້ຂ້າຢູ່ດີມີແຮງ ມີໂຊກມີລາບເດີ ແລ້ວກໍເດີນຕໍ່ໄປ ມື້ໃໝ່ກໍມີຜູ້ໃໝ່ເດີນທາງ ມາອີກເລື້ອຍໆ ມື້ໃໝ່ໃຜກໍມາບູຊາ ບູຊາເລີຍໆ ບາງຄົນກໍມີທູບທຽນມາໄຕ້ ທັງມີເຄື່ອງສົ້ມຂອງຫວານ ອາຫານການກິນ ເຂົ້າຕົ້ມເຂົ້າໜົມ ມາບວງສວງເສັ້ນຈໍ້າ ທັງປາດຖະໜາ ຮ້ອງຂໍຄວາມປະສົງ ຫລາຍຢ່າງແລ້ວຈຶ່ງເດີນຕໍ່ໄປອີກ ຕໍ່ບໍ່ຕໍ່ຍ້ອນ ໄດ້ກິນເຄື່ອງເສັ້ນຂອງຈໍ້ານັ້ນ ຫລາຍວັນເປັນເດືອນ ຫລາຍເດືອນເປັນປີ ກໍເລີຍ ບັງເອີນ ມີຜີສາງເທວະດາ ມາຈັບມາຖືເປັນເຈົ້າຢູ່ໃນຈອມປວກນັ້ນ ເມື່ອມີຜູ້ຄົນ ມາລ້ຽງເກືອເສັ້ນສວງແລ້ວ ປາດຖະໜາຮ້ອງຂໍໂຊກລາບແນວນັ້ນແນວນີ້ ບາງຄົນດົນບັນດານໃຫ້ໄດ້ຕາມຄວາມຄວາມປະສົງກໍມີຫລາຍ ຄວາມຊ່າລືກໍດັງດັງ ໄປທົ່ວສາຣະທິດ ຄົນທີ່ຢູ່ໃກ້ ຢູ່ໄກພາກັນຫລັ່ງໄຫລມາ ນົບໄຫວ້ບູຊາເວລີຍໆ ບໍ່ໄດ້ຂາດ ກໍເລີຍກາຍເປັນຈູມປວກສັກສິດໄປເລີຍ ທຳອິດກໍມີແຕ່ຫັກຟືດໄມ້ ປົກຂີ້ໄມ້ເທົ່ານັ້ນ ດັ່ງນນຄົນເຮົາກໍຄືກັນ ຊິແມ່ນເຈົ້ານາຍຜູ້ຫລັກຜູ້ໃຫຍ່ຂອງພວກເຮົາ ຫລືວ່າເປັນເຈົ້າໂຄດເຈົ້າວົງ ຜູ້ເປັນໃຫຍ່ໃນເຊື້ອຊາດວົງຕະກູນກໍຄວນພາກັນຊຸກຍູ້ ສົ່ງເສີມເຊີດຊູຍູ້ໜູນ ໃຫ້ເປັນຜູ້ມີກຽດສັກສີສູງຂຶ້ນຕື່ມທີ່ເຄົາຣົບເກັງຂາມແກ່ຄົນ ທົ່ວໄປດ້ວຍດັ່ງສຸພາສິດບູຮານທີ່ວ່າ ເຖິງແມ່ນວ່າຈະວິເສດດັ່ງພຣະສັບພັນຍູ ຖ້າບໍ່ມມີຜູ້ເຊີດຊູ ກໍຈະບໍ່ສະຫງ່າງາມນັ້ນແລ

ນວນທີລະກຸນ *ໜັງສືຊຸມນຸມ* ປີພິມ (2007)

(ກ) ໃຫ້ເຈົ້າອະທິບາຍວ່າຜູ້ຂຽນເວົ້າເຖິງການປົກຂີ້ໝາຊຶ່ງເປັນເລື່ອງເປັນຕາຂີ້ດຽດໃນເລື່ອງ ສາດສະນາເພື່ອຈະສື່ອີຫຍັງ

(ຂ) ຜູ້ຂຽນໃຊ້ວັນນະສິນແນວໃດແດ່